# ຢຸດເຮັດວຽກເພື່ອໄປລົງຄະແນນສຽງ

VOTE 2022

*ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກຫຼຸດເງິນຂອງທ່ານ,ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ*

ນາຍຈ້າງຂອງທ່ານຕ້ອງຈ່າຍຄ່າຈ້າງໃຫ້ທ່ານໃນເວລາທີ່ທ່ານໄປລົງຄະແນນສຽງ ຖ້າວ່າມັນເປັນເວລາເຮັດວຽກຂອງທ່ານ ນາຍຈ້າງຂອງທ່ານບໍ່ສາມາດຮຽກຮ້ອງໃຫ້ທ່ານໃຊ້ເວລາພັກຜ່ອນສ່ວນບຸກຄົນຫຼືເວລາພັກຮ້ອນຂອງທ່ານ

ໃຫ້ທ່ານໃຊ້ເວລາພຽງແຕ່ໄປລົງຄະແນນສຽງເທົ່ານັ້ນແລ້ວກັບຄືນໄປເຮັດວຽກ

ນາຍຈ້າງຂອງທ່ານບໍ່ສາມາດປະຕິເສດ,ຈໍາກັດ, ຫຼືແຊກແຊງສິດນີ້ໂດຍກົງຫຼືໂດຍທາງອ້ອມ ລວມທັງເວລາໃດທີ່ທ່ານເລືອກທີ່ຈະໄປລົງຄະແນນສຽງ

ນາຍຈ້າງຂອງທ່ານສາມາດຂໍໃຫ້ທ່ານແຈ້ງເຂົາເຈົ້າເວລາທີ່ທ່ານຈະໄປ ແລະຂໍໃຫ້ພະນັກງານປະສານງານການຂາດງານຂອງພວກເຂົາເຈົ້າ ເພື່ອຫຼຸດຜ່ອນຜົນກະທົບໃນການເຊົາເຮັດວຽກ

ທ່ານມີສິດທີ່ຈະຢຸດເຮັດວຽກເພື່ອໄປລົງຄະແນນສຽງ ໃນການເລືອກຕັ້ງຂອງລັດແລະລັດຖະບານກາງທັງໝົດແລະໃນການເລືອກຕັ້ງປະຈໍາທ້ອງຖິ່ນທັງໝົດທີ່ກໍານົດໄວ້

## ວັນທີຂອງປີ 2022

**ການເລືອກຕັ້ງຂັ້ນຕົ້ນ**
*ວັນອັງຄານ, ວັນທີ 9 ສິງຫາ*

**ລົງຄະແນນສຽງຈະນຶກບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**
*ລົງຄະແນນສຽງທາງໄປສະນີ ຫຼືດ້ວຍຕົວເອງວັນທີ 23 ກັນຍາ ເຖິງ 7 ພຶດສະຈິກາ*

**ລົງທະບຽນເພື່ອລົງຄະແນນສຽງ**
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 18 ຕູລາ ເພື່ອຊ່ວຍປະຢັດເວລາ ໃນວັນເລືອກຕັ້ງ*

**ວັນເລືອກຕັ້ງ**
*ວັນອັງຄານ ວັນທີ່8ເດືອນພຶດສະຈິກາ*

ມີຕໍ່ຂ້າງຫລັງ...

# ຢຸດເຮັດວຽກເພື່ອໄປລົງຄະແນນສຽງ

VOTE 2022

...ສືບຕໍ່ຈາກຂ້າງໜ້າ

## *ການຮ້ອງທຸກ*

ນາຍຈ້າງທີ່ລະເມີດກົດໝາຍນີ້ແມ່ນມີຄວາມຜິດອາຍາຖານເບົາ ທຸກໆຄຳຮ້ອງທຸກຈາກພະນັກງານຄວນຍື່ນໃຫ້ທະນາຍຄວາມຂອງລາວຕີ້

## *ລົງຄະແນນສຽງໃນບໍ່ຊ້ານີ້ໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນເລືອກຕັ້ງໄດ້*

ທ່ານສາມາດລົງຄະແນນສຽງໃນບໍ່ຊ້ານີ້ໄດ້ທີ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນແຕ່ວັນສຸກທີ່ 21 ກັນຍາ ນອກນັ້ນທ່ານຍັງສາມາດສະໝັກຂໍບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນເລືອກຕັ້ງໄດ້ ສົ່ງໃຫ້ທ່ານທາງໄປສະນີໄດ້

ຊອກຫາຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ ຫຼືຂໍບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນເລືອກຕັ້ງໄດ້ ໃຫ້ໄປທີ່ mnvotes.org

***ຈົດໝາຍສຳລັບນາຍຈ້າງຂອງທ່ານ***
*ໄປທີ mnvotes.org ເພື່ອຊອກຫາຈົດໝາຍອະທິບາຍສິດທີ່ຢຸດເຮັດວຽກເພື່ອໄປລົງຄະແນນສຽງ ທີທ່ານສາມາດໃຫ້ນາຍຈ້າງຂອງທ່ານ*